ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 10 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 22 JUL 2022

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 56/ສຄຄຊ, ລົງວັນທີ 5 ກໍລະກົດ 2022.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານຂອງບໍລິສັດປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ທັງພາຍໃນ ຫຼື ຕ່າງປະເທດ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງ ໃຫ້ແກ່ການເຄື່ອນໄຫວວຽກງານ ກ່ຽວກັບການບໍລິການປະເມີນມູນຄ່າຊັບສິນ ແນໃສ່ຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານປະເມີນມູນຄ່າຊັບສິນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ໃໝ່) ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ**

ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແມ່ນ ການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ບໍລິສັດປະເມີນມູນຄ່າຊັບສິນຈາກ ພາຍໃນ ຫຼື ຕ່າງປະເທດ ເຂົ້າມາເຄື່ອນໄຫວໃຫ້ບໍລິການປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບຢູ່ ສປປ ລາວ ຕາມເງື່ອນໄຂ ແລະ ຂອບເຂດການໃຫ້ບໍລິການປະເມີນມູນຄ່າຊັບສິນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໄວ້.

**ມາດຕາ 3 (ປັບປຸງ) ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການປະເມີນມູນຄ່າຊັບສິນ** ໝາຍເຖິງ ການໃຫ້ຄວາມເຫັນ ກ່ຽວກັບມູນຄ່າຂອງຊັບສິນ ໂດຍຜູ້ປະເມີນມູນຄ່າຊັບສິນ;

2. **ຜູ້ປະເມີນມູນຄ່າຊັບສິນ** ໝາຍເຖິງ ບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ທາງດ້ານການປະເມີນມູນຄ່າຊັບສິນ ທີ່ມີເງື່ອນໄຂຕາມການກຳນົດຂອງ ສະມາຄົມປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ຕ່າງປະເທດ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງທີ່ຄຸ້ມຄອງຜູ້ປະເມີນມູນຄ່າຊັບສິນ;

3. **ບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ** ໝາຍເຖິງ ບໍລິສັດທີ່ໃຫ້ບໍລິການປະເມີນມູນຄ່າຊັບສິນ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ;

4. **ບໍລິສັດປະເມີນມູນຄ່າຊັບສິນ ຈາກຕ່າງປະເທດ** ໝາຍເຖິງ ບໍລິສັດທີ່ໃຫ້ບໍລິການປະເມີນມູນຄ່າຊັບສິນ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງຂອງຕ່າງປະເທດ;

5. **ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ** ໝາຍເຖິງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນກູ້, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ກອງທຶນເພື່ອການລົງທຶນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ກຸ່ມເປົ້າໝາຍອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ໃຊ້ບໍລິການຂອງບໍລິສັດປະເມີນມູນຄ່າຊັບສິນ;

6. **ຊັບສິນ** ໝາຍເຖິງ ທີ່ດິນ, ສິ່ງກໍ່ສ້າງ, ເຄື່ອງຈັກ, ອຸປະກອນ, ສັນຍາເຊົ່າ, ສັນຍາສຳປະທານ, ສິດທິບັດ ຫຼື ຊັບສິນທາງປັນຍາ ແລະ ຊັບສິນອື່ນໆ ທີ່ສາມາດປະເມີນມູນຄ່າໄດ້ຕາມມາດຕະຖານທາງວິຊາການ;

7. **ສິ່ງກໍ່ສ້າງ** ໝາຍເຖິງ ຕຶກ, ອາຄານ, ໂຮງຈັກ, ໂຮງງານ, ເຂື່ອນໄຟຟ້າ, ໂຄງລ່າງພື້ນຖານ ແລະ ສິ່ງກໍ່ສ້າງອື່ນໆ;

8. **ອຸປະກອນ** ໝາຍເຖິງ ສິ່ງປະດິດຊະນິດຕ່າງໆ ທີ່ໃຊ້ໃນການສະໜັບສະໜູນຂະບວນການຜະລິດ ແລະ ການດຳເນີນທຸລະກິດ;

9. **ມູນຄ່າຕະຫຼາດ** ໝາຍເຖິງ ລາຄາຊື້ ຂາຍຊັບສິນ ທີ່ເກີດຂຶ້ນໃນຕະຫຼາດທີ່ເປັນຄວາມຈິງ ເກີດຂຶ້ນໃນອະດີດທັນທີທີ່ມີການຊື້ ຂາຍ ເກີດຂຶ້ນໂດຍເປັນຕົວຊັບສິນທີ່ຄືກັນລະຫວ່າງ ຜູ້ຊື້ ແລະ ຜູ້ຂາຍ ໃນຊັບສິນໃນສະຖານະການນັ້ນໆ ຊຶ່ງອາດ ເທົ່າກັນ, ຫຼາຍກວ່າ ຫຼື ໜ້ອຍກວ່າ ກໍ່ໄດ້;

10. **ສິດທິບັດ** ໝາຍເຖິງ ເອກະສານຢັ້ງຢືນທີ່ເປັນທາງການຈາກອົງການຈັດຕັ້ງລັດ ເພື່ອປົກປ້ອງການປະດິດສ້າງທີ່ໃໝ່, ມີຂັ້ນຕອນການປະດິດສ້າງ ແລະ ສາມາດນຳໃຊ້ເຂົ້າສູ່ການຜະລິດອຸດສາຫະກຳໄດ້;

11. **ຊັບສິນທາງປັນຍາ** ໝາຍເຖິງ ຜົນງານທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ຊຶ່ງເປັນຜູ້ປະດິດສ້າງ ແລະ ປະດິດຄິດແຕ່ງຂຶ້ນມາ;

12. **ພາກສ່ວນກ່ຽວຂ້ອງ** ໝາຍເຖິງ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະສາຂາ ແລະ ຄະນະພະແນກ ຂອງບໍລິສັດປະເມີນມູນຄ່າຊັບສິນຈາກ ພາຍໃນ ຫຼື ຕ່າງປະເທດ.

**ມາດຕາ 4 (ໃໝ່) ຫຼັກການ**

ການເຄື່ອນໄຫວຂອງບໍລິສັດປະເມີນມູນຄ່າຊັບສິນ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
2. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
3. ຮັບປະກັນການ ຄຸ້ມຄອງ, ຕິດຕາມ ແລະ ກວດກາ;
4. ສອດຄ່ອງກັບມູນຄ່າຕາມກົນໄກຕະຫຼາດ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ຕ່າງປະເທດ, ຜູ້ປະເມີນມູນຄ່າຊັບສິນ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ

**ມາດຕາ 6 ການສະເໜີຂໍຮັບຮອງບໍລິສັດປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງໃຫ້ການບໍລິການປະເມີນມູນຄ່າຊັບສິນ ແກ່ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນເອກະສານປະກອບການຂໍຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ.

**ມາດຕາ 7 (ປັບປຸງ) ເງື່ອນໄຂການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງໃຫ້ບໍລິການປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 78. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີທຶນຈົດທະບຽນຕ່ຳສຸດ 500.000.000 ກີບ;
2. ການກຳນົດຊື່ຂອງບໍລິສັດຕ້ອງມີຄຳວ່າ "ປະເມີນມູນຄ່າຊັບສິນ";
3. ມີຄະນະອຳນວຍການທີ່ມີໃບປະກາດສະນີຍະບັດຈົບສາຂາ ການປະເມີນມູນຄ່າຊັບສິນ, ການບັນຊີ, ການເງິນ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
4. ເປັນບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ບໍລິສັດປະເມີນມູນຄ່າຊັບສິນ ຈາກຕ່າງປະເທດ ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດທີ່ເປັນສະມາຊິກຂອງ ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (Intrenational Organization of Securities Commission ຂຽນຫຍໍ້ IOSCO) ຫຼື ຂອງປະເທດທີ່ມີສາຍພົວພັນຮ່ວມມື ໂດຍການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ອົງການຄຸ້ມຄອງວຽກງານຫຼັກຊັບຂອງ ສປປ ລາວ;
5. ມີຊື່ສຽງ ແລະ ປະສົບການໃນການປະເມີນມູນຄ່າຊັບສິນ;
6. ມີລະບົບການຄຸ້ມຄອງບໍລິຫານພາຍໃນທີ່ຮັບປະກັນ;
7. ມີຜູ້ປະເມີນມູນຄ່າຊັບສິນຢ່າງໜ້ອຍ 2 ຄົນ ທີ່ມີໃບຢັ້ງຢືນນັກວິຊາຊີບຜູ້ປະເມີນມູນຄ່າຊັບສິນຈາກອົງການຄຸ້ມຄອງວຽກງານຫຼັກຊັບ ແລະ ສະມາຄົມປະເມີນມູນຄ່າຊັບສິນທີ່ກ່ຽວຂ້ອງຈາກ ພາຍໃນ ຫຼື ຕ່າງປະເທດ;
8. ມີຖານະການເງິນດີ ຫຼື ການດຳເນີນທຸລະກິດ ຕ້ອງມີກຳໄລ 1 ປີຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍົກເວັ້ນບໍລິສັດປະເມີນມູນຄ່າຊັບສິນທີ່ສ້າງຕັ້ງຂຶ້ນໃໝ່;
9. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 (ປັບປຸງ) ເອກະສານປະກອບການຂໍຮັບຮອງບໍລິສັດປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງໃຫ້ບໍລິການປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ຕ້ອງປະກອບເອກະສານການຂໍຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 79. ນອກຈາກນັ້ນ ຍັງຕ້ອງມີເອກະສານເພີ່ມເຕີມ ດັ່ງນີ້:

1. ບັນຊີລາຍຊື່, ຊີວະປະຫວັດຫຍໍ້ ແລະ ໃບແຈ້ງໂທດ ບໍ່ໃຫ້ກາຍ 3 ເດືອນຍ້ອນຫຼັງຂອງ ຄະນະອຳນວຍການ;
2. ບັນຊີລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ນັກວິຊາຊີບຜູ້ປະເມີນມູນຄ່າຊັບສິນ;
3. ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ 1 ປີຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຍົກເວັ້ນບໍລິສັດປະເມີນມູນຄ່າຊັບສິນ ທີ່ສ້າງຕັ້ງຂຶ້ນໃໝ່;
4. ແຜນການດຳເນີນທຸລະກິດຢູ່ ສປປ ລາວ ພາຍຫຼັງໄດ້ຮັບການຮັບຮອງ;
5. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 (ປັບປຸງ) ການພິຈາລະນາການຂໍຮັບຮອງບໍລິສັດປະເມີນມູນຄ່າຊັບສິນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ເອກະສານປະກອບການຂໍຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຕ້ອງປະກາດໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງເປັນຕົ້ນໄປ.

**ມາດຕາ 10 (ປັບປຸງ) ເງື່ອນໄຂການຂໍຮັບຮອງຜູ້ປະເມີນມູນຄ່າຊັບສິນ**

ການຮັບຮອງຜູ້ປະເມີນມູນຄ່າຊັບສິນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນວິຊາຊີບຜູ້ປະເມີນມູນຄ່າຊັບສິນ ຈາກສະມາຄົມປະເມີນມູນຄ່າຊັບສິນ ພາຍໃນ ຫຼື ຕ່າງປະເທດ;
2. ບໍ່ຖືກດຳເນີນຄະດີ ຫຼື ຢູ່ໃນລະຫວ່າງຖືກດຳເນີນຄະດີ ທາງອາຍາ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ ຫຼື ກະທຳຜິດທາງດ້ານການເງິນ ແລະ ພຶດຕິກຳທີ່ເປັນການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ;
3. ສຳລັບຄົນລາວ ທີ່ຈົບສາຂາການປະເມີນມູນຄ່າຊັບສິນ ທີ່ບໍ່ມີໃບຢັ້ງຢືນວິຊາຊີບຜູ້ປະເມີນມູນຄ່າຊັບສິນ ຕ້ອງມີປະສົບການໃນການປະເມີນມູນຄ່າຊັບສິນຢ່າງໜ້ອຍ 3 ປີ, ຜ່ານການທົດສອບທັງພາກ ທິດສະດີ ແລະ ພຶດຕິກຳຕົວຈິງ ແລະ ຕ້ອງຜ່ານການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 11 (ປັບປຸງ) ເອກະສານປະກອບການຂໍຮັບຮອງຜູ້ປະເມີນມູນຄ່າຊັບສິນ

ເອກະສານປະກອບການຂໍຮັບຮອງຜູ້ປະເມີນມູນຄ່າຊັບສິນ ມີດັ່ງນີ້:

1. ຄໍາຮ້ອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ຊີວະປະຫວັດຫຍໍ້ຂອງຜູ້ປະເມີນມູນຄ່າຊັບສິນ ສໍາລັບຜູ້ທີ່ ສະເໜີຂໍຮັບຮອງ ແລະ ຂໍຕໍ່ອາຍຸຮັບຮອງຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

3. ສໍາເນົາໃບຢັ້ງຢືນວິຊາຊີບຜູ້ປະເມີນມູນຄ່າຊັບສິນ ຈາກອົງການຄຸ້ມຄອງວຽກງານຫຼັກຊັບ ແລະ ສະມາຄົມປະເມີນມູນຄ່າຊັບສິນທີ່ກ່ຽວຂ້ອງຈາກ ພາຍໃນ ຫຼື ຕ່າງປະເທດ (ຍົກເວັ້ນ ຜູ້ປະເມີນມູນຄ່າຊັບສິນທີ່ເປັນຄົນລາວ ທີ່ຮຽນຈົບສາຂາການປະເມີນມູນຄ່າຊັບສິນ ທີ່ບໍ່ມີໃບຢັ້ງຢືນວິຊາຊີບຜູ້ປະເມີນມູນຄ່າຊັບສິນ ຕ້ອງມີໃບຢັ້ງຢືນປະສົບການໃນການປະເມີນມູນຄ່າຊັບສິນ ຢ່າງໜ້ອຍ 3 ປີ ຈາກ ບໍລິສັດປະເມີນມູນຄ່າຊັບສິນ ທີ່ຜູ້ກ່ຽວສັງກັດ);

4. ໃບແຈ້ງໂທດບໍ່ໃຫ້ກາຍ 3 ເດືອນ ຍ້ອນຫຼັງ ນັບແຕ່ວັນຍື່ນຄໍາຮ້ອງ ແລະ ເອກະສານປະກອບມາຍັງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

5. ໃບຢັ້ງຢືນທີ່ຢູ່ປັດຈຸບັນ;

6. ສໍາເນົາ ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ ທີ່ຍັງບໍ່ທັນໝົດອາຍຸການນໍາໃຊ້;

7. ຮູບຖ່າຍ ບໍ່ເກີນ ສາມ ເດືອນ ຂະໜາດ 3 x 4 ຈໍານວນ 3 ໃບ;

8. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ມາດຕາ 12 (ປັບປຸງ) ການພິຈາລະນາການສະໜີຂໍຮັບຮອງຜູ້ປະເມີນມູນຄ່າຊັບສິນ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ເອກະສານປະກອບການຂໍຮັບຮອງຜູ້ປະເມີນມູນຄ່າຊັບສິນ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ມາດຕາ 13 (ປັບປຸງ) ຄ່າບໍລິການ

ບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ຕ້ອງເສຍຄ່າບໍລິການໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສໍານວນຄໍາຮ້ອງຂໍການຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນ ຈໍານວນ 5.000.000 ກີບ ແລະ ຜູ້ປະເມີນມູນຄ່າຊັບສິນ ຈໍານວນ 1.000.000 ກີບ ຕໍ່ຄົນ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຍື່ນສໍານວນຄໍາຮ້ອງຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;

2. ຄ່າອອກໃບຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນ ຈໍານວນ 15.000.000 ກີບ ແລະ ຜູ້ປະເມີນມູນຄ່າຊັບສິນ ຈໍານວນ 2.000.000 ກີບ ຕໍ່ຄົນ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;

3. ຄ່າຕໍ່ໃບຮັບຮອງເປັນ ບໍລິສັດປະເມີນມູນຄ່າຊັບສິນ ຈໍານວນ 10.000.000 ກີບ ແລະ ຜູ້ປະເມີນມູນຄ່າຊັບສິນ ຈໍານວນ 2.000.000 ກີບ ຕໍ່ຄົນ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;

4. ຄ່າຄຸ້ມຄອງປະຈໍາປີບໍລິສັດປະເມີນມູນຄ່າຊັບສິນ ຈໍານວນ 5.000.000 ກີບ ແລະ ຜູ້ປະເມີນມູນຄ່າຊັບສິນ ຈໍານວນ 1.000.000 ກີບ ຕໍ່ຄົນ ແລະ ຕ້ອງຊໍາລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ.

ກໍລະນີ ບໍລິສັດປະເມີນມູນຄ່າຊັບສິນ ຫາກບໍ່ໄດ້ເຊັນສັນຍາໃຫ້ບໍລິການດ້ານການປະເມີນມູນຄ່າຊັບສິນໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ພາຍໃນປີນັ້ນແມ່ນ ບໍລິສັດ ແລະ ຜູ້ປະເມີນມູນຄ່າຊັບສິນ ຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈຳປີ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ອາຍຸການຮັບຮອງ ແລະ ການຕໍ່ອາຍຸການຮັບຮອງ ຂອງບໍລິສັດປະເມີນມູນຄ່າຊັບສິນ

### ມາດຕາ 14 (ປັບປຸງ) ຂອບເຂດການໃຫ້ບໍລິການຂອງບໍລິສັດປະເມີນມູນຄ່າຊັບສິນ

ບໍລິສັດປະເມີນມູນຄ່າຊັບສິນ ສາມາດເຄື່ອນໄຫວໃຫ້ບໍລິການປະເມີນມູນຄ່າຊັບສິນ ໃຫ້ແກ່ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕາມຂອບເຂດ ດັ່ງນີ້:

1. ປະເມີນມູນຄ່າທີ່ດິນ;
2. ປະເມີນມູນຄ່າສິ່ງກໍ່ສ້າງ;
3. ປະເມີນມູນຄ່າເຄື່ອງຈັກ;
4. ປະເມີນມູນຄ່າອຸປະກອນ;
5. ປະເມີນມູນຄ່າສັນຍາເຊົ່າ;
6. ປະເມີນມູນຄ່າສັນຍາສຳປະທານ;
7. ປະເມີນມູນຄ່າຊັບສິນທາງປັນຍາ;
8. ໃຫ້ບໍລິການອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ການປະເມີນມູນຄ່າຊັບສິນຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງສອດຄ່ອງກັບມູນຄ່າຕາມກົນໄກຕະຫຼາດ ແລະ ຕ້ອງນຳໃຊ້ຫຼັກການປະເມີນມູນຄ່າຊັບສິນ ສອດຄ່ອງກັບລະບົບບັນຊີລາວ ຫຼື ມາດຕະຖານລາຍງານການເງິນສາກົນ (International Financial Reporting Standard ຂຽນຫຍໍ້ IFRS).

### ມາດຕາ 15 (ປັບປຸງ) ອາຍຸການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ

ໃບຮັບຮອງ ບໍລິສັດປະເມີນມູນຄ່າຊັບສິນ ມີອາຍຸການ 3 ປີ. ສຳລັບ ຜູ້ປະເມີນມູນຄ່າຊັບສິນ ມີອາຍຸການ 2 ປີ ນັບແຕ່ວັນໄດ້ຮັບການຮັບຮອງ ເປັນຕົ້ນໄປ.

### ມາດຕາ 16 (ປັບປຸງ) ການຕໍ່ອາຍຸການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ

ບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການປະເມີນມູນຄ່າຊັບສິນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ມາດຕາ 10 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

ສຳລັບ ຜູ້ປະເມີນມູນຄ່າຊັບສິນ ທີ່ມີຈຸດປະສົງໃນການຕໍ່ອາຍຸການຮັບຮອງ ນອກຈາກມີເງື່ອນໄຂຕາມທີ່ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ແລ້ວ, ຜູ້ກ່ຽວ ຕ້ອງໄດ້ມີການເຂົ້າຝຶກອົບຮົມປະຈຳປີ ກ່ຽວກັບການປະເມີນມູນຄ່າຊັບສິນ ພ້ອມທັງສິ່ງເອກະສານຢັ້ງຢືນ ກ່ຽວກັບການເຂົ້າຮ່ວມຝຶກອົບຮົມດັ່ງກ່າວ ມາໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອຊາບ.

## ໝວດທີ 4
## ສິດ ແລະ ໜ້າທີ່, ການລາຍງານ ຂອງບໍລິສັດປະເມີນມູນຄ່າຊັບສິນ

**ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ຂອງບໍລິສັດປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 82. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ຄົ້ນຄວ້າສ້າງ ລະບຽບການ ຫຼື ຄູ່ມື ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຂອງຕົນ;

2. ເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ເປັນຄວາມລັບຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ຕົນໃຫ້ບໍລິການ ເປັນເວລາ 10 ປີ ນັບແຕ່ວັນເຮັດສັນຍາໃຫ້ບໍລິການກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

3. ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນໄວ້ ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

4. ປະຕິບັດພັນທະເສຍຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ແລະ ປະຕິບັດພັນທະອາກອນ ແລະ ຄ່າທຳນຽມ ທີ່ກ່ຽວຂ້ອງກັບການໃຫ້ບໍລິການຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະໄລຍະ.

**ມາດຕາ 18 ການລາຍງານການປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ຕ້ອງລາຍງານການດຳເນີນທຸລະກິດຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ສະພາບການດຳເນີນທຸລະກິດຢູ່ ສປປ ລາວ ປະຈຳໄຕມາດ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດແຕ່ລະໄຕມາດ;

2. ສະພາບການດຳເນີນທຸລະກິດຢູ່ ສປປ ລາວ ປະຈຳປີ ພາຍໃນເວລາ 90 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ;

3. ບົດປະເມີນມູນຄ່າຊັບສິນໃນແຕ່ລະກໍລະນີ ທີ່ບໍລິສັດປະເມີນມູນຄ່າຊັບສິນໃຫ້ບໍລິການແກ່ລູກຄ້າຂອງຕົນ ພ້ອມດ້ວຍ ສັນຍາການໃຫ້ບໍລິການປະເມີນມູນຄ່າຊັບສິນ ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ດັ່ງກ່າວ ພາຍໃນເວລາ 10 ວັນ ນັບແຕ່ວັນສຳເລັດການໃຫ້ບໍລິການ ເປັນຕົ້ນໄປ;

4. ແຜນການດຳເນີນລະອຽດ ໃນແຕ່ລະໄລຍະຕໍ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;

5. ການປ່ຽນແປງ ຄະນະອຳນວຍການ ແລະ ຜູ້ປະເມີນມູນຄ່າຊັບສິນ ເຊັ່ນ: ຊື່ ແລະ ນາມສະກຸນ ແລະ ຊີວະປະຫວັດຫຍໍ້ ພາຍໃນເວລາ 15 ວັນ ນັບແຕ່ວັນມີການປ່ຽນແປງເປັນຕົ້ນໄປ.

ສຳລັບ ເນື້ອໃນການລາຍງານ ໃຫ້ປະຕິບັດຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໃນແຕ່ລະໄລຍະ.

## ໝວດທີ 5
## ການໂຈະ, ການຖອນ ໃບຮັບຮອງ ບໍລິສັດປະເມີນມູນຄ່າຊັບສິນ, ຜູ້ປະເມີນມູນຄ່າຊັບສິນ ແລະ ຂໍ້ຫ້າມ

**ມາດຕາ 19 (ໃໝ່) ການໂຈະໃບຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ຈະຖືກໂຈະການໃຫ້ບໍລິການປະເມີນມູນຄ່າຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 83. ນອກຈາກນັ້ນ, ຍັງຈະຖືກໂຈະໃບຮັບຮອງເພີ່ມເຕີມ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຂາດເງື່ອນໄຂໃດໜຶ່ງໃນການຮັບຮອງ ບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
2. ບໍ່ລາຍງານການໃຫ້ບໍລິການປະເມີນມູນຄ່າຊັບສິນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ປະຕິບັດຕາມສັນຍາໃຫ້ບໍລິການທີ່ໄດ້ເຊັນ ກັບ ລູກຄ້າຂອງຕົນ;
4. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;
5. ໂຈະໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງຖືກສັ່ງໂຈະການໃຫ້ບໍລິການ ບໍລິສັດປະເມີນມູນຄ່າຊັບສິນ ຕ້ອງປັບປຸງແກ້ໄຂຂໍ້ຜິດພາດ ໃຫ້ສຳເລັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 20 (ໃໝ່) ການຖອນໃບຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ**

ບໍລິສັດປະເມີນມູນຄ່າຊັບສິນ ຈະຖືກຖອນໃບຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 84. ນອກຈາກນັ້ນ, ຍັງຈະຖືກຖອນໃບຮັບຮອງເພີ່ມເຕີມ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ບໍລິສັດປະເມີນມູນຄ່າຊັບສິນ ຖືກຍຸບເລີກ ຫຼື ລົ້ມລະລາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
2. ບໍລິສັດປະເມີນມູນຄ່າຊັບສິນ ຖືກຖອນໃບທະບຽນວິສາຫະກິດ ຈາກພາກສ່ວນທີ່ກ່ຽວຂ້ອງ;
3. ຖືກສຶກສາອົບຮົມ ຫຼື ກ່າວເຕືອນຢ່າງເປັນລາຍລັກອັກສອນແລ້ວ ແຕ່ຍັງສືບຕໍ່ລະເມີດ;
4. ຖອນໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 21 (ໃໝ່) ຂໍ້ຫ້າມ**

ບໍລິສັດປະເມີນມູນຄ່າຊັບສິນ, ຜູ້ບໍລິຫານ ແລະ ຜູ້ປະເມີນມູນຄ່າຊັບສິນ ມີຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 175. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ໃຫ້ການບໍລິການປະເມີນມູນຄ່າຊັບສິນ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນໄລຍະທີ່ບໍລິສັດຖືກຮ້ອງຟ້ອງ ຫຼື ຜູ້ປະເມີນມູນຄ່າຊັບສິນຖືກດຳເນີນຄະດີທາງອາຍາ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທຳຜິດ ກ່ຽວກັບທຸລະກິດດ້ານຫຼັກຊັບ ຫຼື ກະທຳຜິດທາງດ້ານການເງິນ ແລະ ພຶດຕິກຳທີ່ເປັນການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ;

2. ບໍ່ລາຍງານ, ລາຍງານບໍ່ຖືກຕ້ອງ ຫຼື ລາຍງານລ່າຊ້າ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້;

3. ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັບລູກຄ້າ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22 (ໃໝ່) ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ຕ່າງປະເທດ, ຜູ້ປະເມີນມູນຄ່າຊັບສິນ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໃຫ້ບໍລິການປະເມີນມູນຄ່າຊັບສິນ ທີ່ຕິດພັນກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 23 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ຕ່າງປະເທດ, ຜູ້ປະເມີນມູນຄ່າຊັບສິນ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການໃຫ້ບໍລິການປະເມີນມູນຄ່າຊັບສິນ ທີ່ຕິດພັນກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ;
2. ມາດຕະການປັບໃໝ;
3. ມາດຕະການເພີ່ມເຕີມ.

### ມາດຕາ 24 (ໃໝ່) ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍຕໍ່ອາຍຸການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ກ່ອນວັນທີ່ໃບຮັບຮອງຈະໝົດອາຍຸ ຕໍ່າກວ່າ 45 ວັນ, ລາຍງານການປະເມີນມູນຄ່າຊັບສິນລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງຕົກລົງສະບັບນີ້;

4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 25 (ໃໝ່) ມາດຕະການປັບໃໝ

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດ ໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ໃຫ້ການບໍລິການປະເມີນມູນຄ່າຊັບສິນ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນໄລຍະທີ່ບໍລິສັດຖືກຮ້ອງຟ້ອງ ຫຼື ຜູ້ປະເມີນມູນຄ່າຊັບສິນຖືກດຳເນີນຄະດີ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ ຫຼື ກະທຳຜິດທາງດ້ານການເງິນ ແລະ ພຶດຕິກຳທີ່ເປັນການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ. ສຳລັບຜູ້ປະເມີນມູນຄ່າຊັບສິນ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 30.000.000 ກີບ;

3. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ເປັນຄວາມລັບຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນໄລຍະເວລາທີ່ຕົນໃຫ້ບໍລິການປະເມີນມູນຄ່າຊັບສິນ ແລະ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວເປັນເວລາ 10 ປີ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ;

4. ບໍ່ລາຍງານ, ລາຍງານບໍ່ຖືກຕ້ອງ ຫຼື ລາຍງານຊັກຊ້າ ກ່ຽວກັບສະພາບການດຳເນີນທຸລະກິດຂອງຕົນຢູ່ ສປປ ລາວ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ ຕໍ່ຄັ້ງ;

5. ບໍ່ລາຍງານ, ລາຍງານບໍ່ຖືກຕ້ອງ ຫຼື ລາຍງານຊັກຊ້າ ກ່ຽວກັບການໃຫ້ບໍລິການປະເມີນມູນຄ່າຊັບສິນ ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

6. ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັບລູກຄ້າ ຈະຖືກປັບໃໝ່ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດສັນຍາ.

ມາດຕາ 26 (ໃໝ່) ມາດຕະການເພີ່ມເຕີມ

ມາດຕະການເພີ່ມເຕີມຕໍ່ ບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມການກຳນົດຂອງ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະການໃຫ້ບໍລິການປະເມີນມູນຄ່າຊັບສິນ ແລະ ໃບຮັບຮອງຜູ້ປະເມີນມູນຄ່າຊັບສິນ;

3. ຖອນໃບຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນ ແລະ ໃບຮັບຮອງຜູ້ປະເມີນມູນຄ່າຊັບສິນ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

ມາດຕະການຕໍ່ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ໃນກໍລະນີ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ໃຊ້ບໍລິການຂອງບໍລິສັດປະເມີນມູນຄ່າຊັບສິນ ແລະ ຜູ້ປະເມີນມູນຄ່າຊັບສິນ ທີ່ບໍ່ໄດ້ຜ່ານການຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດປະເມີນມູນຄ່າຊັບສິນ ຈາກພາຍໃນ ຫຼື ຕ່າງປະເທດ, ຜູ້ປະເມີນມູນຄ່າຊັບສິນ, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການປະເມີນມູນຄ່າຊັບສິນ ທີ່ຕິດພັນກັບວຽກງານຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 28 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນ ລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ສະບັບເລກທີ 003/ຄຄຊ, ລົງວັນທີ 8 ທັນວາ 2015.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ປະທານ

**ສອນໄຊ ສີພັນດອນ**